**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

-------------

ລັດຖະບານ

ເລກທີ 04 /ລບ

ນະຄອນຫຼວງວຽງຈັນ, ວັນທີ 24.05.2016.

# ມະຕິຕົກລົງ

## ກອງປະຊຸມ ຄັ້ງປະຖົມມະລຶກຂອງລັດຖະບານ ຊຸດທີ VIII

ກອງປະຊຸມຄັ້ງປະຖົມມະລຶກຂອງລັດຖະບານ ຊຸດທີ VIII ໄດ້ດໍາເນີນໃນວັນທີ 29 ເມສາ 2016 ທີ່ຫ້ອງປະຊຸມລັດຖະບານ ພາຍໃຕ້ການເປັນປະທານຂອງທ່ານ ທອງລຸນ ສີສຸລິດ ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ໂດຍມີການເຂົ້າຮ່ວມຂອງບັນດາທ່ານສະມາຊິກລັດຖະບານ ຊຸດທີ VIII ຈໍານວນ 28 ທ່ານ. ກອງປະຊຸມໄດ້ຮັບຟັງການລາຍງານ ແລະ ພິຈາລະນາຮັບຮອງເອົາບັນຫາສໍາຄັນ ດັ່ງນີ້:

**1. <u>ກອງປະຊຸມໄດ້ຮັບຟັງການລາຍງານ ກ່ຽວກັບແຜນການດໍາເນີນງານຂອງລັດຖະບານ ຊຸດທີ VIII ໄລຍະ 5 ປີ (2016-2020); ຂໍ້ຕົກລົງຂອງນາຍົກລັດຖະມົນຕີ ວ່າດ້ວຍລະບອບແບບແຜນວິທີເຮັດວຽກຂອງລັດຖະບານ ແລະ ຂໍ້ຕົກລົງ ວ່າດ້ວຍການແບ່ງງານລະຫວ່າງນາຍົກ-ຮອງນາຍົກ ແລະ ລັດຖະມົນຕີປະຈໍາສໍານັກງານນາຍົກລັດຖະມົນຕີ</u>,** ຊຶ່ງສະເຫນີໂດຍທ່ານ ສອນໄຊ ສີພັນດອນ ຮອງນາຍົກລັດຖະມົນຕີ.

**1.1.** ຈຸດປະສົງແຜນດໍາເນີນງານຂອງລັດຖະບານ ຊຸດທີ VIII ສະບັບນີ້ ແມ່ນເພື່ອຈັດຕັ້ງຜັນຂະຫຍາຍເນື້ອໃນກອງປະຊຸມໃຫຍ່ ຄັ້ງທີ X ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ແຫ່ງລັດ ຄັ້ງທີ VIII ແລະ ມະຕິກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ເທື່ອທີ VIII ໃຫ້ເຂົ້າສູ່ວຽກງານຕົວຈິງ ໂດຍຫັນເປັນແຜນການ, ໂຄງການ ແລະ ມີການແບ່ງງານ, ແບ່ງຄວາມຮັບຜິດຊອບ ຢ່າງຈະແຈ້ງຕາມລັດຖະທໍາມະນູນ ແລະ ກົດໝາຍ ວ່າດ້ວຍລັດຖະບານ; ທັງເປັນບ່ອນອີງໃຫ້ແກ່ການຕິດຕາມ, ກວດກາ ແລະ ສະຫຼຸບ ຕີລາຄາການປະຕິບັດໜ້າທີ່ຊີ້ນໍາ-ບັນຊາ ຂອງບັນດາສະມາຊິກລັດຖະບານ ແນ່ໃສ່ການປະຕິບັດພາລະບົດບາດຢ່າງມີຈຸດສຸມ, ເປັນລະບົບ, ມີແບບແຜນ ແລະ ມີປະສິດທິພາບ-ປະສິດທິຜົນສູງ ໃນແຕ່ລະດ້ານ, ແຕ່ລະຂົງເຂດວຽກງານ ເພື່ອຮັບປະກັນການຊຸກຍູ້ປະຕິບັດບາດກ້າວບຸກທະລຸທັງ 4 ດ້ານຢ່າງຕໍ່ເນື່ອງ ແລະ ຈັດຕັ້ງປະຕິບັດບັນດາຄາດໝາຍໃຫຍ່ ກໍ່ຄື 6 ແຜນວຽກຈຸດສຸມໂດຍລວມ, 6 ວຽກງານຈຸດສຸມລົງເລິກແຕ່ລະຂົງເຂດວຽກງານ ແລະ 6 ແຜນວຽກຈຸດສຸມແຕ່ນີ້ຫາທ້າຍປີ 2016 ໃຫ້ໄດ້ຈັດຕັ້ງປະຕິບັດໄວ ແລະ ເກີດໝາກຜົນຕົວຈິງຢ່າງເປັນຮູບປະທໍາ.

1.1.1. ກອງປະຊຸມຕີລາຄາວ່າ: ແຜນດໍາເນີນງານຂອງລັດຖະບານ ສະບັບນີ້ ແມ່ນການຜັນຂະຫຍາຍເນື້ອໃນກອງປະຊຸມໃຫຍ່ຂອງພັກ, ມະຕິກອງປະຊຸມຂອງສະພາແຫ່ງຊາດ ໂດຍຈັດບູລິມະສິດບັນດາບັນຫາຮີບດ່ວນ-ບັນຫາພື້ນຖານຂອງປະເທດ ເປັນແຜນງານ-ແຜນວຽກຈຸດສຸມຢ່າງລະອຽດ ໃນການແກ້ໄຂບັນຫາຂອງປະເທດ ກໍ່ຄືການພັດທະນາເສດຖະກິດ-ສັງຄົມເຮົາ ໃຫ້ເຕີບໃຫຍ່ເຂັ້ມແຂງ ເພື່ອເຮັດໃຫ້ປະເທດຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ ໃນປີ 2020, ແຕ່ເຖິງຢ່າງໃດກໍ່ດີ ເພື່ອໃຫ້ບັນລຸເປົ້າໝາຍທີ່ວາງໄວ ລັດຖະບານຕ້ອງໄດ້ເອົາໃຈໃສ່ຄຸ້ມຄອງໃຫ້ດີບາງບັນຫາຕື່ມ ເປັນຕົ້ນ: ບັນຫາໄມ້, ບັນຫາທີ່ດິນ, ບັນຫາຊັບພະຍາກອນແຮ່ທາດ, ບັນຫາສື່ສັງຄົມອອນລາຍ, ແກ້ໄຂປະກົດການຫຍໍ້ທໍ້ອື່ນໆ ແລະ ບັນຫາການເຄື່ອນຍ້າຍແຮງງານຢ່າງເສລີ ທີ່ບໍ່ຖືກຕ້ອງຢູ່ປະເທດເຮົາ.

1.1.2. ໂດຍພື້ນຖານແລ້ວ ກອງປະຊຸມເຫັນດີຮັບຮອງເອົາແຜນດໍາເນີນງານຂອງລັດຖະບານ ຊຸດທີ VIII ໄລ

ຍະ 5 ປີ (2016-2020) ດັ່ງກ່າວ, ແຕ່ມອບໃຫ້ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ແຕ່ງຕັ້ງຄະນະປັບປຸງເນື້ອໃນຕື່ມ ຕາມການປະກອບຄຳເຫັນຂອງສະມາຊິກລັດຖະບານ ໂດຍໃຫ້ລົງເລິກ ຄື: ໃຫ້ກຳນົດແຜນງານ, ວິທີການ, ມາດຕະການ ໃຫ້ກວມລວມຮອບດ້ານແທດກັບຕົວຈິງ ໂດຍວາງຄາດໝາຍດ້ານເວລາໃສ່ແຕ່ລະວຽກຈຸດສຸມ ເພື່ອເຫັນໄດ້ແຕ່ລະເດືອນລັດຖະບານ ຈະແກ້ບັນຫາໃດ ແລະ ພາກສ່ວນໃດຮັບຜິດຊອບ ເພື່ອບັນລຸບັນດາຄາດໝາຍໃຫຍ່ ກໍ່ຄືແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VIII ທີ່ກຳນົດໄວ້ ແລ້ວສົ່ງໃຫ້ນາຍົກ-ຮອງນາຍົກລັດຖະມົນຕີ ກວດແກ້ປະກາດໃຊ້.

**1.2.** <u>ກ່ຽວກັບຂໍ້ຕົກລົງຂອງນາຍົກລັດຖະມົນຕີ ວ່າດ້ວຍລະບອບແບບແຜນວິທີເຮັດວຽກຂອງລັດຖະບານ ແລະ ການແບ່ງງານພາຍໃນ.</u>

1.2.1. ກອງປະຊຸມເຫັນວ່າ: ເອກະສານທັງ 2 ສະບັບນີ້ ມີຄວາມສຳຄັນຫຼາຍ ເພື່ອຫັນທຸກກຳແຮງຂອງລັດຖະບານ ເຂົ້າສູ່ວຽກງານຕົວຈິງ ໃນການຈັດຕັ້ງປະຕິບັດນະໂຍບາຍ, ມະຕິ, ຄຳສັ່ງຂອງພັກ; ປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳລຸ່ມກົດໝາຍ ກໍ່ຄືປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VIII ທີ່ສະພາແຫ່ງຊາດຮັບຮອງເອົາ ໃຫ້ມີປະສິດທິຜົນ ແລະ ມີໝາກຜົນຕົວຈິງ; ພ້ອມທັງແກ້ໄຂບັນຫາຂໍ້ຄົງຄ້າງ ແລະ ຮັບມືກັບສິ່ງທ້າທາຍຕ່າງໆ ດ້ວຍສະຕິການເມືອງ, ຄວາມຮັກຊາດ ແລະ ມີຄວາມຮັບຜິດຊອບສູງຕໍ່ປິດບາດ ແລະ ອິດທິພົນຂອງພັກ-ລັດຢ່າງເປັນເຈົ້າການແຕ່ຫົວທີ ຂອງລັດຖະບານ.

1.2.2. ໂດຍພື້ນຖານແລ້ວ ກອງປະຊຸມເຫັນດີຮັບຮອງເອົາການແບ່ງງານນາຍົກ-ຮອງນາຍົກລັດຖະມົນຕີ ແລະ ແບບແຜນວິທີເຮັດວຽກຂອງລັດຖະບານ ແລະ ໝູ່ຄະນະ, ແຕ່ມອບໃຫ້ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ແຕ່ງຕັ້ງຄະນະປັບປຸງເນື້ອໃນຕື່ມ ຕາມການປະກອບຄຳເຫັນຂອງສະມາຊິກລັດຖະບານ ໂດຍໃຫ້ເອົາໃຈໃສ່ບຸກທະລຸດ້ານຈິນຕະນາການ, ລະບອບລະບຽບການ, ແບບແຜນວິທີເຮັດວຽກ, ສາມັກຄີເປັນຈິດໜຶ່ງໃຈດຽວ ພ້ອມກັນບຸກບືນຜ່ານຜ່າດ້ວຍຄວາມຮັບຜິດຊອບສູງ ຕໍ່ ສິດ ແລະ ໜ້າທີ່ ທີ່ຖືກມອບໝາຍຢ່າງເປັນເຈົ້າການ ກໍ່ຄືໜ້າທີ່ການເມືອງຂອງຕົນ.

**2. <u>ແຜນວຽກຈຸດສຸມຂອງລັດຖະບານ ປະຈຳເດືອນພຶດສະພາ 2016:</u>**

2.1. ໃຫ້ເອົາໃຈໃສ່ເຮັດວຽກປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ເພື່ອຮັບປະກັນຄວາມສະຫງົບປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ; ສຸມໃສ່ແກ້ໄຂ ແລະ ສະກັດກັ້ນປະກົດການຫຍໍ້ທໍ້ໃນສັງຄົມ ຕາມຄຳສັ່ງເລກທີ 27/ນຍ ໃຫ້ຫຼຸດໜ້ອຍຖອຍລົງເປັນກ້າວໆ.

2.2. ໃຫ້ກະຊວງກ່ຽວຂ້ອງກະກຽມ ກ່ຽວກັບຮ່າງຄຳສັ່ງນາຍົກລັດຖະມົນຕີ ວ່າດ້ວຍການສ້າງແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ ແລະ ແຜນເງິນຕາ ປີ 2017 ແລະ ບົດແນະນຳຂອງລັດຖະມົນຕີກ່ຽວຂ້ອງໃນການຈັດຕັ້ງປະຕິບັດແຜນດັ່ງກ່າວ.

2.3. ໃຫ້ກະຊວງການເງິນ, ກະຊວງແຜນການ ແລະ ການລົງທຶນ ນຳເອົາແຜນດັດແກ້ງົບປະມານ ສົກປີ 2015-2016 ແລະ ແຜນງົບປະມານຂ້າມຜ່ານ 3 ເດືອນ ຕາມມະຕິກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດຊຸດທີ VIII ໄດ້ຮັບຮອງເອົາແລ້ວ ສືບຕໍ່ສົມທົບກັບກະຊວງກ່ຽວຂ້ອງ ເພື່ອແກ້ໄຂການເບີກຈ່າຍເງິນເດືອນ ໃຫ້ສຳເລັດ, ຈັດເກັບລາຍຮັບໃຫ້ໄດ້ຕາມແຜນ. ພ້ອມກັນນັ້ນ, ກໍ່ໃຫ້ຊຸກຍູ້ທ້ອງຖິ່ນ ເພີ່ມທະວີ ແລະ ເປັນເຈົ້າການມີສ່ວນ ຮ່ວມໃນການເກັບລາຍຮັບເຂົ້າງົບປະມານ.

2.4. ໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ສືບຕໍ່ເອົາໃຈໃສ່ເພີ່ມທະວີຄວາມເອົາໃຈໃສ່ ໃນການຄຸ້ມຄອງລາຄາສິນຄ້າໃນທ້ອງຕະຫຼາດ ໃຫ້ຢູ່ໃນເກນທີ່ເໝາະສົມ ເພື່ອຮັບປະກັນຄວາມຍຸຕິທຳໃຫ້ແກ່ຜູ້ບໍລິໂພກ.

2.5. ໃຫ້ກະຊວງກະສິກຳ ແລະ ປ່າໄມ້ ເປັນເຈົ້າການສົມທົບກັບພາກສ່ວນກ່ຽວຂ້ອງ ເອົາໃຈໃສ່ຊຸກຍູ້ການກະກຽມ ໃຫ້ແກ່ການຜະລິດລະດູຝົນທີ່ຈະມາເຖິງນີ້, ພ້ອມທັງກຽມຄວາມພ້ອມໃນການຊອກຫາວິທີແກ້ໄຂບັນຫາຕັກແຕນລະບາດແຮງຢູ່ແຂວງພາກເໜືອ ແລະ ກະກຽມບັນດາວັດຖຸປັດໃຈ ໃຫ້ແກ່ການຜະລິດຢ່າງເປັນເຈົ້າການ; ພ້ອມນັ້ນ ກໍ່ໃຫ້ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຕິດຕາມສະພາບດິນຟ້າອາກາດ ເພື່ອແຈ້ງເຕືອນໃຫ້ປະຊາຊົນກ່ຽວກັບໄພທຳມະຊາດທີ່ອາດຈະເກີດຂຶ້ນ ເພື່ອກະກຽມຄວາມພ້ອມຮັບມືໃຫ້ທັນການ.

2.6. ສືບຕໍ່ເອົາໃຈໃສ່ວຽກງານຕິດຕາມເຝົ້າລະວັງພະຍາດລະບາດຕາມລະດູການ ແລະ ສ້າງກິດຈະກຳເພື່ອສະເຫຼີມສະຫຼອງວັນເດັກນ້ອຍສາກົນ ແລະ ວັນປູກຕົ້ນໄມ້ແຫ່ງຊາດ.

2.7. ໃຫ້ກະຊວງພາຍໃນສືບຕໍ່ຄົ້ນຄ້ວາປັບປຸງກົງຈັກ ແລະ ພາລະບົດບາດຂອງບັນດາກະຊວງ ໃຫ້ສຳເລັດ.

2.8. ໃຫ້ກະຊວງການຕ່າງປະເທດກະກຽມເນື້ອໃນເອກະສານຕ່າງໆທີ່ກ່ຽວຂ້ອງ ເພື່ອຢ້ຽມຢາມທາງການ ສສ. ຫວຽດນາມ, ກຳປູເຈຍ ແລະ ປະເທດເພື່ອນມິດໃກ້ຄຽງ, ເຂົ້າຮ່ວມກອງປະຊຸມສຸດຍອດສະເຫຼີມສະຫຼອງການພົວພັນອາຊຽນ-ຣັດເຊຍ ຄົບຮອບ 20 ປີ ທີ່ ໂຊຈິ; ເຂົ້າຮ່ວມກອງປະຊຸມ G7 ໃນນາມປະທານອາຊຽນ ທີ່ປະເທດຍີ່ປຸ່ນ ໃຫ້ແກ່ທ່ານນາຍົກລັດຖະມົນຕີ ພ້ອມທັງສືບຕໍ່ຕິດຕາມສະພາບສາກົນ ແລະ ພາກພື້ນ ຢ່າງໃກ້ສິດ.

2.9. ກອງປະຊຸມລັດຖະບານປະຈຳເດືອນພຶດສະພາ 2016 ຄາດວ່າຈະຈັດໃສ່ງວັນທີ 24-25 ພຶດສະພາ 2016 ຈຶ່ງສະເໜີຂະແໜງການກ່ຽວຂ້ອງກະກຽມເນື້ອ ໃນທີ່ຈະລາຍງານຕໍ່ກອງປະຊຸມລັດຖະ ບານໃຫ້ທັນເວລາ.

ຕາງໜ້າລັດຖະບານ,
ນາຍົກລັດຖະມົນຕີ